ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3536----

ກະຊວງສຶກສາທິການ ແລະ ກິລາ ເລກທີ 3536 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 26 ກໍລະກົດ 2023

# ຂໍ້ຕົກລົງ

## ວ່າດ້ວຍການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ

- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 1 ສະພາແຫ່ງຊາດຊຸດທີ IX ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ 2021-2023 ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021;
- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ການສະເໜີຂອງກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ສະບັບເລກທີ 619/ກພສ, ລົງວັນທີ 29 ມິຖຸນາ 2023.

### ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ມາດຕະຖານ, ຂັ້ນຕອນ ແລະ ວິທີການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີຄວາມເປັນເອກະພາບ, ປະສິດທິພາບ ແລະ ປະສິດທິຜົນ ໃນຂະແໜງການສຶກສາທິການ ແລະ ກິລາ ແນໃສ່ພັດທະນາຊັບພະຍາກອນມະນຸດ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.



สแกนด้วย CamScanner

ມາດຕາ 2 ການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ

ການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ແມ່ນຂະບວນການຄັດເລືອກເອົາກົມກອງ, ສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ ທຸກຂັ້ນ, ທຸກສາຍ ໃນຂະແໜງການສຶກສາ ແລະ ກິລາ ທີ່ສາມາດປະຕິບັດໄດ້ຕາມມາດຕະຖານ ການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ທີ່ໄດ້ກຳນົດໄວ້.

ມາດຕາ 3 ຫຼັກການລວມ

ການເຄື່ອນໄຫວວຽກງານການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບຫຼັກການ;
2. ຮັບປະກັນການປະເມີນຜົນ ໄປຕາມເນື້ອໃນມາດຕະຖານທີ່ກຳນົດໄວ້;
3. ຮັບປະກັນການປະຕິບັດຕາມຂັ້ນຕອນ, ວິທີການຂອງການປະເມີນ ແລະ ຕາມເວລາທີ່ກຳນົດໄວ້;
4. ຮັບປະກັນຄວາມເປັນເອກະພາບ, ໂປ່ງໃສ, ພາວະວິໄສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວຽກງານສ້າງກົມກອງ ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ທຸກຂັ້ນ, ທຸກສາຍ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ມາດຕະຖານການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ

ມາດຕາ 5 ມາດຕະຖານການສ້າງກົມກອງປອດຢາເສບຕິດ

ມາດຕະຖານການສ້າງກົມກອງປອດຢາເສບຕິດ ປະກອບມີ ດັ່ງນີ້:

1. ແຜນການເຄື່ອນໄຫວວຽກງານຕ້ານຢາເສບຕິດ ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ;

2. ນຳພາຄົ້ນຄວ້າ, ເຜີຍແຜ່ ເນື້ອໃນເອກະສານຂອບແນວຄວາມຄິດກ່ຽວກັບການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃນຂະແໜງການສຶກສາທິການ ແລະ ກິລາ, ນຳໄປຈັດຕັ້ງຜັນຂະຫຍາຍເປັນກິດຈະກຳ, ເຂົ້າໃນຂົງເຂດຄວາມຮັບຜິດຊອບຂອງຕົນ ແລະ ຈັດຕັ້ງປະຕິບັດໃຫ້ເກີດຜົນເປັນຈິງ ປະຈຳໄຕມາດ;

3. ບຸກຄະລາກອນພາຍໃນກົມກອງ 95% ໄດ້ຮັບການໂຄສະນາ, ເຜີຍແຜ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງກ່ຽວກັບຜົນຮ້າຍ ແລະ ຄວາມອັນຕະລາຍຂອງຢາເສບຕິດດ້ວຍຫຼາຍຮູບແບບ, ຫຼາຍວິທີການຢ່າງໜ້ອຍໃຫ້ໄດ້ 2 ຄັ້ງຕໍ່ປີ;

4. ບຸກຄະລາກອນພາຍໃນກົມກອງຂອງຕົນ ປາສະຈາກການພົວພັນສິ່ງເສບຕິດ ແລະ ປະກົດການຫຍໍ້ທໍ້ຕ່າງໆ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ;

5. ສ້າງຂະບວນການຕ້ານຢາເສບຕິດ ໂດຍເປີດຂະບວນການແຂ່ງຂັນກິລາ-ກາຍຍະກຳ, ສິລະປະ, ສ້າງສະພາບແວດລ້ອມທີ່ດີໃນກົມກອງ ແລະ ສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນທີ່ຂຶ້ນກັບຢ່າງໜ້ອຍໃຫ້ໄດ້ 2 ຄັ້ງຕໍ່ປີ ພ້ອມທັງຕິດປ້າຍຄຳຂວັນ, ປ້າຍໂຄສະນາຕ່າງໆ ກ່ຽວກັບຜົນຮ້າຍ ແລະ ຄວາມເປັນອັນຕະລາຍຂອງຢາເສບຕິດ ແລະ ອອກແຮງງານອະນາໄມລວມ ເປັນປົກກະຕິ;



สแกนด้วย CamScanner

6. ສໍາລັບກົມກອງທີ່ມີສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ ທີ່ຂຶ້ນກັບ ຕ້ອງສ້າງສະຖານການສຶກສາ ແລະ ກິລາ ທີ່ປອດຢາເສບຕິດ ໃຫ້ບັນລຸ 80% ຂຶ້ນໄປ.

**ມາດຕາ 6 ມາດຕະຖານການສ້າງສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ**

ມາດຕະຖານການສ້າງສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ປະກອບມີ ດັ່ງນີ້:

1. ແຜນການເຄື່ອນໄຫວວຽກງານຕ້ານ ແລະ ສະກັດກັ້ນ ຢາເສບຕິດ ປະຈໍາເດືອນ, ປະຈໍາໄຕມາດ ແລະ ປະຈໍາສົກຮຽນ;

2. ແຜນການປ້ອງກັນພາຍໃນ ແລະ ແກ້ໄຂບັນຫາຢາເສບຕິດ, ປະກົດການຫຍໍ້ທໍ້ຢ່າງສອດຄ່ອງ, ຮັດກຸມ ແລະ ທັນການ;

3. ລະບອບການປະຊຸມ, ສ່ອງແສງ, ລາຍງານປະຈໍາເດືອນ, ປະຈໍາໄຕມາດ ແລະ ປະຈໍາສົກຮຽນ;

4. ສ້າງກຸ່ມນັກຮຽນປະຈໍາຫ້ອງເພື່ອຕິດຕາມ, ກວດກາ ກຸ່ມສ່ຽງ ແລະ ກຸ່ມເສບຂອງສະຖານການສຶກສາ;

5. ໂຄສະນາ, ເຜີຍແຜ່ ແລະ ຜັນຂະຫຍາຍນິຕິກໍາຕ່າງໆ ກ່ຽວກັບການຕ້ານ ແລະ ສະກັດກັ້ນຢາເສບຕິດ ແລະ ປະກົດການຫຍໍ້ທໍ້ໃນຂະແໜງການສຶກສາທິການ ແລະ ກິລາ (ເຄື່ອງດື່ມທີ່ມີທາດເຫຼົ້າ, ສານກະຕຸ້ນທີ່ອອກລິດຕໍ່ລະບົບປະສາດ, ສື່ລາມົກອານາຈານ, ການພະນັນ, ເກມອອນລາຍ...) ຢ່າງໜ້ອຍ 3 ຄັ້ງຕໍ່ປີ;

6. ສ້າງຂະບວນການດ້ວຍຫຼາຍຮູບແບບ ເຊັ່ນ: ຂະບວນການແຂ່ງຂັນກິລາ, ສິລະປະ, ຖາມ-ຕອບວິທະຍາສາດ ຢ່າງໜ້ອຍ 3 ຄັ້ງຕໍ່ປີ;

7. ການຕິດຕາມພຶດຕິກໍາ, ເກັບກໍາຂໍ້ມູນນັກຮຽນ, ນັກສຶກສາ ທີ່ເປັນກຸ່ມສ່ຽງ, ກຸ່ມເສບ ແລະ ກຸ່ມຄ້າ 1 ຄັ້ງຕໍ່ອາທິດ;

8. ຈັດຕັ້ງປະຕິບັດລະບົບການຄັດແຍກນັກຮຽນ, ນັກສຶກສາ (ກຸ່ມປອດ, ກຸ່ມສ່ຽງ, ກຸ່ມເສບ ແລະ ກຸ່ມຄ້າ) ບໍ່ປົກປິດກຸ່ມສ່ຽງ, ກຸ່ມເສບ ແລະ ກຸ່ມຄ້າຢາເສບຕິດ ຢ່າງໜ້ອຍ 2 ຄັ້ງຕໍ່ປີ (ຕົ້ນສົກຮຽນ ແລະ ທ້າຍສົກຮຽນ);

9. ການສຸ່ມກວດ ນໍ້າປັດສະວະ ເພື່ອຫາສານເສບຕິດ ໃນນັກຮຽນ, ນັກສຶກສາ ທີ່ເປັນກຸ່ມສ່ຽງ ຢ່າງໜ້ອຍ 1 ຄັ້ງຕໍ່ປີ;

10. ນັກຮຽນ, ນັກສຶກສາ ໃນສະຖານການສຶກສາປາສະຈາກການພົວພັນກັບຢາເສບຕິດ ກໍານົດກຸ່ມສ່ຽງ ບໍ່ເກີນ 3% ຂອງຈໍານວນທັງໝົດ;

11. ບຸກຄະລາກອນການສຶກສາ, ຄູ, ອາຈານ, ນັກຮຽນ, ນັກສຶກສາ ໃນສະຖານການສຶກສາປາສະຈາກກຸ່ມເສບ ແລະ ກຸ່ມຄ້າ ຢາເສບຕິດ;

12. ມີຄູ ອາຈານ ຢ່າງໜ້ອຍ 1 ຄົນໃຫ້ຄໍາປຶກສາ ແລະ ແນະນໍາແກ່ນັກຮຽນ, ນັກສຶກສາ ທີ່ເປັນກຸ່ມສ່ຽງ, ກຸ່ມເສບ ເພື່ອແກ້ໄຂບັນຫາຢາເສບຕິດໃນສະຖານການສຶກສາ;

13. ປະສານສົມທົບກັບໜ່ວຍງານທີ່ກ່ຽວຂ້ອງ ເພື່ອສົ່ງຕໍ່ນັກຮຽນ, ນັກສຶກສາ ທີ່ເສບຢາເສບຕິດ ຄັ້ງທີ 1 ເຂົ້າສູ່ການບໍາບັດປິ່ນປົວຮັກສາຕາມຄວາມສະໝັກໃຈ ເມື່ອເຊົາແລ້ວໃຫ້ກັບມາຮຽນໄດ້ຕາມປົກກະຕິ ໂດຍບໍ່ໄລ່ອອກ ຫຼື ຍົກຍ້າຍ ນັກຮຽນ, ນັກສຶກສາ ອອກຈາກສະຖານການສຶກສາ;

14. ການຈັດສະພາບແວດລ້ອມທີ່ເອື້ອອໍານວຍຕໍ່ການສຶກສາ ແລະ ສົ່ງເສີມການຮຽນຮູ້ ຂອງນັກຮຽນ, ນັກສຶກສາ ໃຫ້ຮູ້ເຖິງຜົນຮ້າຍ ແລະ ຄວາມເປັນອັນຕະລາຍຂອງຢາເສບຕິດ ຢ່າງໜ້ອຍ 1 ຄັ້ງຕໍ່ປີ, ພ້ອມທັງໃຫ້ມີ ປ້າຍຄໍາຂວັນ, ປ້າຍໂຄສະນາຕ່າງໆ ກ່ຽວກັບຜົນຮ້າຍ ແລະ ຄວາມເປັນອັນຕະລາຍຂອງຢາເສບຕິດ ໃນບໍລິເວນສະຖານການສຶກສາ ແລະ ກິລາ.



สแกนด้วย CamScanner

# ໝວດທີ 3
# ຂັ້ນຕອນ, ວິທີການ ແລະ ການຮັບຮອງ

## ມາດຕາ 7 ຂັ້ນຕອນ

ຜູ້ບໍລິຫານການສຶກສາ ແລະ ກິລາ ແຕ່ລະຂັ້ນ ທີ່ມີຈຸດປະສົງສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເຊື່ອມຊຶມ ແລະ ກຳແໜ້ນຈຸດປະສົງ, ຫຼັກການ, ເນື້ອໃນ, ມາດຕະຖານ ແລະ ວິທີຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ພ້ອມທັງ ຄົ້ນຄວ້າສ້າງແຜນການໃນການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ໃນທົ່ວຂະແໜງການສຶກສາທິການ ແລະ ກິລາ ເພື່ອຂໍອະນຸມັດຈາກຄະນະຮັບຜິດຊອບທີ່ຕົນຂຶ້ນກັບ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ;
2. ແຕ່ງຕັ້ງຄະນະຮັບຜິດຊອບ, ກະກຽມ ບັນດາເອກະສານ, ງົບປະມານ ແລະ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;
3. ຈັດຕັ້ງເຜີຍແຜ່ເນື້ອໃນ, ມາດຕະຖານ, ແຜນການ ແລະ ວິທີການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ຄະນະຮັບຜິດຊອບແຕ່ລະຂັ້ນຮັບຊາບ;
4. ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນ ແບບແຜນວິທີເຮັດວຽກຕົວຈິງ ຂອງຄະນະຮັບຜິດຊອບໃນແຕ່ລະຂັ້ນ ປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີ ຖ້າອັນໃດບໍ່ທັນສອດຄ່ອງກໍໃຫ້ແນະນຳ ຫຼື ແກ້ໄຂໃຫ້ທັນເວລາ;
5. ສະຫຼຸບ ແລະ ລາຍງານ ວຽກງານການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ໃນແຕ່ລະໄລຍະ ໃຫ້ຂັ້ນຖັດຕົນຮັບຊາບເປັນປົກກະຕິ.

## ມາດຕາ 8 ວິທີການ

ການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ໃຫ້ປະຕິບັດ ດັ່ງນີ້:

1. ກະຊວງສຶກສາທິການ ແລະ ກິລາ ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ຄູ່ມືໃນການຈັດຕັ້ງປະຕິບັດ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ;
2. ບັນດາກົມກອງ, ສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ ທຸກຊັ້ນ, ທຸກສາຍ ໃນຂະແໜງການສຶກສາ ແລະ ກິລາ ເປັນເຈົ້າການຄົ້ນຄວ້າ, ຜັນຂະຫຍາຍບັນດາເນື້ອໃນ ແລະ ວິທີການຈັດຕັ້ງປະຕິບັດຕົວຈິງກ່ຽວກັບວຽກງານສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດເປັນແຜນການ, ແຜນງານ, ໂຄງການລະອຽດຢູ່ໃນຂັ້ນຂອງຕົນ ໂດຍມີການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ;
3. ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ, ເປັນເສນາທິການໃຫ້ແກ່ຄະນະນຳກະຊວງ ໃນການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ພ້ອມທັງສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ຂັ້ນເທິງຮັບຊາບເປັນປົກກະຕິ.

## ມາດຕາ 9 ການຮັບຮອງ

ການຮັບຮອງ ກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດມີ ດັ່ງນີ້:

1. ຄະນະຮັບຜິດຊອບແຕ່ລະຂັ້ນຊີ້ນຳການຈັດຕັ້ງປະເມີນຜົນການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ແລະ ກວດກາການປະເມີນຜົນ;



สแกนด้วย CamScanner

2. ຄະນະຮັບຜິດຊອບແຕ່ລະຂັ້ນດຳເນີນການສະຫຼຸບ, ຕີລາຄາ ປະເມີນຜົນການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ຕາມມາດຕະຖານທີ່ໄດ້ກຳນົດໄວ້;

3. ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ ໃນຂະແໜງການສຶກສາທິການ ແລະ ກິລາ ທັງພາກລັດ ແລະ ເອກະຊົນ ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ໃຫ້ຄະນະຮັບຜິດຊອບຕາມຂັ້ນຄຸ້ມຄອງຂອງຕົນ ພິຈາລະນາ, ຄົ້ນຄວ້າຕາມລະບຽບການ ເພື່ອອອກຂໍ້ຕົກລົງ ແລະ ໃບຢັ້ງຢືນຮັບຮອງ ກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ.

## ໝວດທີ 4
## ຄະນະຮັບຜິດຊອບສ້າງກົມກອງ, ສະຖານການສຶກສາ ແລະ ກິລາປອດຢາເສບຕິດ

### ມາດຕາ 10 ຄະນະຮັບຜິດຊອບ

ຄະນະຮັບຜິດຊອບວຽກງານການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ປະກອບມີ:

1. ຂັ້ນກະຊວງ
2. ຂັ້ນແຂວງ
3. ຂັ້ນເມືອງ
4. ຂັ້ນສະຖານການສຶກສາ ແລະ ກິລາ

### ມາດຕາ 11 ການແຕ່ງຕັ້ງຄະນະຮັບຜິດຊອບ

ການແຕ່ງຕັ້ງຄະນະຮັບຜິດຊອບວຽກງານການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ມີດັ່ງນີ້:

- ຂັ້ນກະຊວງ
  1. ຫົວໜ້າ ຫ້ອງການ/ກົມ/ອົງການທຽບເທົ່າກົມ/ສະຖາບັນ/ສູນ ເປັນຫົວໜ້າ;
  2. ຮອງຫົວໜ້າ ຫ້ອງການ/ຮອງຫົວໜ້າກົມ/ອົງການທຽບເທົ່າກົມ/ສະຖາບັນ/ສູນ ເປັນຮອງ;
  3. ຫົວໜ້າ ພະແນກ/ຂະແໜງທີ່ຮັບຜິດຊອບວຽກງານຕ້ານຢາເສບຕິດ ເປັນຄະນະ;
  4. ຫົວໜ້າ ພະແນກ/ຂະແໜງທີ່ຮັບຜິດຊອບວຽກງານກວດກາ ເປັນຄະນະ;
  5. ຫົວໜ້າ ພະແນກ/ຂະແໜງທີ່ຮັບຜິດຊອບວຽກງານນະໂຍບາຍ ແລະ ຍ້ອງຍໍ ເປັນຄະນະ;
  6. ວິຊາການ ພະແນກ/ຂະແໜງທີ່ຮັບຜິດຊອບວຽກງານຕ້ານຢາເສບຕິດ ກອງເລຂາ.
- ຂັ້ນແຂວງ
  1. ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ເປັນຫົວໜ້າ;
  2. ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ເປັນຮອງ;
  3. ຫົວໜ້າຂະແໜງທີ່ຮັບຜິດຊອບວຽກງານຕ້ານຢາເສບຕິດ ເປັນຄະນະ;
  4. ຫົວໜ້າຂະແໜງທີ່ຮັບຜິດຊອບວຽກງານກວດກາ ເປັນຄະນະ;
  5. ຫົວໜ້າຂະແໜງທີ່ຮັບຜິດຊອບວຽກງານນະໂຍບາຍ ແລະ ຍ້ອງຍໍ ເປັນຄະນະ;
  6. ວິຊາການທີ່ຮັບຜິດຊອບວຽກງານຕ້ານຢາເສບຕິດ ກອງເລຂາ.



สแกนด้วย CamScanner

➢ ຂັ້ນເມືອງ

1. ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ເປັນຫົວໜ້າ;
2. ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ເປັນຮອງ;
3. ຫົວໜ້າໜ່ວຍງານທີ່ຮັບຜິດຊອບວຽກງານຕ້ານຢາເສບຕິດ ເປັນຄະນະ;
4. ຫົວໜ້າໜ່ວຍງານທີ່ຮັບຜິດຊອບວຽກງານກວດກາ ເປັນຄະນະ;
5. ຫົວໜ້າໜ່ວຍງານທີ່ຮັບຜິດຊອບວຽກງານນະໂຍບາຍ ແລະ ຍ້ອງຍໍ ເປັນຄະນະ;
6. ຄະນະພັດທະນາການສຶກສາຂັ້ນເມືອງ ເປັນຄະນະ;
7. ວິຊາການໜ່ວຍງານທີ່ຮັບຜິດຊອບວຽກງານຕ້ານຢາເສບຕິດ ກອງເລຂາ.

➢ ສະຖານການສຶກສາ ແລະ ກິລາ

1. ອະທິການບໍດີ/ຜູ້ອໍານວຍການ ສະຖາບັນ/ວິທະຍາໄລ/ໂຮງຮຽນ/ສູນ ເປັນຫົວໜ້າ;
2. ຮອງອະທິການບໍດີ/ຮອງຜູ້ອໍານວຍການ ສະຖາບັນ/ວິທະຍາໄລ/ໂຮງຮຽນ/ສູນ ເປັນຮອງ;
3. ຫົວໜ້າ ຫ້ອງການ/ພະແນກ/ຂະແໜງ/ໜ່ວຍງານທີ່ຮັບຜິດຊອບວຽກງານ ຕ້ານຢາເສບຕິດ ເປັນຄະນະ;
4. ຫົວໜ້າ ຫ້ອງການ/ພະແນກ/ຂະແໜງ/ໜ່ວຍງານທີ່ຮັບຜິດຊອບ ວຽກງານກວດກາ ເປັນຄະນະ;
5. ຫົວໜ້າ ຫ້ອງການ/ພະແນກ/ຂະແໜງ/ໜ່ວຍງານທີ່ຮັບຜິດຊອບ ວຽກງານນະໂຍບາຍ ແລະ ຍ້ອງຍໍ ເປັນຄະນະ;
6. ຄະນະພັດທະນາການສຶກສາຂັ້ນບ້ານ ເປັນຄະນະ;
7. ວິຊາການທີ່ຮັບຜິດຊອບວຽກງານຕ້ານຢາເສບຕິດ ທີ່ກ່ຽວຂ້ອງ ກອງເລຂາ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບ**

ຄະນະຮັບຜິດຊອບມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ແຜນງານ, ໂຄງການ, ເຄື່ອງມືຕິດຕາມກວດກາວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ແລະ ນິຕິກໍາອື່ນໆທີ່ກ່ຽວຂ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຈັດຕັ້ງເຜີຍແຜ່, ຜັນຂະຫຍາຍມະຕິ, ຄໍາສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ປະຊຸມ ແລະ ຮັບການສ່ອງແສງ ລາຍງານສະພາບການກ່ຽວກັບວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດປະຈໍາ 3 ເດືອນ, 6 ເດືອນ ແລະ ປະຈໍາປີ;

4. ປະສານສົມທົບກັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ໃນການລາຍງານ, ຊີ້ແຈງ ແລະ ໃຫ້ຂໍ້ມູນທີ່ກ່ຽວຂ້ອງ;

5. ນໍາສະເໜີຂັ້ນເທິງແຕ່ງຕັ້ງຄະນະກວດກາສະເພາະກິດ ເພື່ອກວດກາສະພາບບັນຫາທີ່ເກີດຂຶ້ນໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ສະເໜີການຍ້ອງຍໍໃຫ້ກົມກອງ, ສະຖານການສຶກສາທັງພາກລັດ ແລະ ເອກະຊົນ, ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ຕາມລະບຽບການ;



สแกนด้วย CamScanner

7. ຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບ ແລະ ລາຍງານການຈັດຕັ້ງການເຄື່ອນໄຫວວຽກງານຂອງຕົນໃຫ້ຂັ້ນເທິງຮັບຊາບເປັນປົກກະຕິ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງຖັດຕົນ.

**ມາດຕາ 13 ໜ້າທີ່ຂອງກອງເລຂາ**

ກອງເລຂາເປັນໃຈກາງປະສານງານກັບພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃນຂະແໜງການສຶກສາທິການ ແລະ ກິລາ, ກອງເລຂາຂອງແຕ່ລະພາກສ່ວນມີໜ້າທີ່ດັ່ງນີ້:

1. ສ້າງແຜນການ, ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານ ໃຫ້ຄະນະຮັບຜິດຊອບຂັ້ນຕົນເປັນແຕ່ລະໄລຍະ;

2. ສັງລວມ ແລະ ລາຍງານການຈັດຕັ້ງພິທີເປີດ ແລະ ສະຫຼຸບບັ້ນແຂ່ງຂັນແຕ່ລະໄລຍະ;

3. ຕິດຕາມ ການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;

4. ເຂົ້າຮ່ວມບັນທຶກກອງປະຊຸມປະຈໍາ 3 ເດືອນ, 6 ເດືອນ ແລະ ປະຈໍາປີ ຂອງຄະນະຮັບຜິດຊອບແຕ່ລະພາກສ່ວນ;

5. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງຖັດຕົນ.

## ໝວດທີ 5
## ການຍ້ອງຍໍ, ມາດຕະການຕໍ່ການລະເມີດ ແລະ ການລາຍງານ

**ມາດຕາ 14 ເປົ້າໝາຍການຍ້ອງຍໍ**

ບຸກຄົນ, ນິຕິບຸກຄົນ, ກົມກອງ, ສະຖານການສຶກສາ ແລະ ກິລາ ທີ່ມີຜົນງານດີເດັ່ນໃນການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດແຕ່ຂັ້ນສູນກາງຮອດທ້ອງຖິ່ນ.

**ມາດຕາ 15 ຂັ້ນການຍ້ອງຍໍ**

ການຍ້ອງຍໍ ປະກອບມີ 5 ຂັ້ນ ດັ່ງນີ້:

1. ຂັ້ນລັດຖະບານ;
2. ຂັ້ນກະຊວງສຶກສາທິການ ແລະ ກິລາ;
3. ຂັ້ນແຂວງ;
4. ຂັ້ນເມືອງ;
5. ຂັ້ນສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ.

**ມາດຕາ 16 ການຍ້ອງຍໍ ຕໍ່ກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ**

1. ກົມກອງ

ກົມກອງ ທີ່ມີຜົນງານດີເດັ່ນໃນການສ້າງກົມກອງປອດຢາເສບຕິດ ຈະໄດ້ຮັບການຍ້ອງຍໍປະຈໍາປີຕາມການແບ່ງຂັ້ນຄຸ້ມຄອງ (ຂັ້ນເມືອງ, ຂັ້ນແຂວງ ຫຼື ຂັ້ນກະຊວງ);

ກົມກອງ ທີ່ມີຜົນງານດີເດັ່ນໃນການສ້າງກົມກອງປອດຢາເສບຕິດ ຕໍ່ເນື່ອງກັນ 4 ປີ ຂຶ້ນໄປຈະໄດ້ຮັບການພິຈາລະນາສະເໜີໃຫ້ລັດຖະບານຍ້ອງຍໍຕາມຄວາມເໝາະສົມ.



สแกนด้วย CamScanner

2. ສະຖານການສຶກສາ ແລະ ກິລາ

ສະຖານການສຶກສາ ແລະ ກິລາ ທີ່ມີຜົນງານດີເດັ່ນໃນການສ້າງສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ຈະໄດ້ຮັບການຍ້ອງຍໍປະຈໍາສົກຮຽນ ຕາມການແບ່ງຂັ້ນຄຸ້ມຄອງ (ກົມກອງ, ຂັ້ນເມືອງ, ຂັ້ນແຂວງ ຫຼື ຂັ້ນກະຊວງ);

ສະຖານການສຶກສາ ແລະ ກິລາ ທີ່ມີຜົນງານດີເດັ່ນໃນການສ້າງສະຖານການສຶກສາ ແລະ ກິລາ ປອດຢາເສບຕິດຕໍ່ເນື່ອງກັນ 4 ສົກຮຽນ ຂຶ້ນໄປຈະໄດ້ຮັບການພິຈາລະນາສະເໜີໃຫ້ລັດຖະບານຍ້ອງຍໍຕາມຄວາມເໝາະສົມ.

ມາດຕາ 17 ມາດຕະການຕໍ່ການລະເມີດ

1. ກົມກອງ, ສະຖານການສຶກສາ ແລະ ກິລາ ທີ່ໄດ້ຮັບຮອງ ແລະ ປະກາດເປັນກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດແລ້ວ ກໍລະນີມີການລະເມີດມາດຕະຖານ, ເງື່ອນໄຂ ໃນຂໍ້ຕົກລົງສະບັບນີ້ ຫຼື ລະເມີດກົດໝາຍຈົນເປັນຄະດີ ຈະບໍ່ໄດ້ຮັບການພິຈາລະນາ ແລະ ມອບໃບຢັ້ງຢືນໃຫ້ເປັນກົມກອງ, ສະຖານການສຶກສາ ແລະກິລາ ປອດຢາເສບຕິດ ຫຼື ຈະຖືກໂຈະ ແລະ ລຶບລ້າງຊື່ອອກຈາກກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດພາຍໃນປີ ຫຼື ສົກຮຽນນັ້ນ;

2. ຜູ້ບໍລິຫານການສຶກສາ ແລະ ກິລາທຸກຂັ້ນ, ຄະນະຮັບຜິດຊອບ, ພະນັກງານ, ລັດຖະກອນສຶກສາ, ຄູ, ອາຈານ, ນັກຮຽນ, ນັກສຶກສາ ຫາກມີສ່ວນຮ່ວມ ແລະ ພົວພັນກັບຢາເສບຕິດ ລ້ວນແລ້ວແຕ່ຖືກລົງວິໄນຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍ ຈັນຍາບັນ, ຂໍ້ຫ້າມ ແລະ ການລົງວິໄນ ຕໍ່ຄູ-ບຸກຄະລາກອນຂະແໜງການສຶກສາທິການ ແລະ ກິລາ ສະບັບເລກທີ 6074/ສສກ, ລົງວັນທີ 28 ທັນວາ 2021 ພ້ອມທັງໄດ້ຮັບໂທດຕາມກົດໝາຍອາຍາ ແລະ ກົດໝາຍແພ່ງຕາມກໍລະນີໜັກ ຫຼື ເບົາ.

ມາດຕາ 18 ການລາຍງານ

1. ກະຊວງສຶກສາທິການ ແລະ ກິລາ ຕິດຕາມ, ກວດກາ, ສະຫຼຸບ ແລະ ລາຍງານຂໍທິດຊີ້ນໍາຈາກລັດຖະບານເປັນປະຈໍາ;

2. ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ຕິດຕາມ ສັງລວມສະພາບການຈັດຕັ້ງປະຕິບັດວຽກງານການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສະຫຼຸບ ແລະ ລາຍງານຕໍ່ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ຮັບຊາບເປັນປົກກະຕິ;

3. ບັນດາຫ້ອງການ, ກົມ, ອົງການທຽບເທົ່າກົມ, ສະຖາບັນ, ສູນ ທີ່ຂຶ້ນກັບສໍານັກກະຊວງສຶກສາທິການ ແລະ ກິລາ ລາຍງານການຈັດຕັ້ງປະຕິບັດການສ້າງກົມກອງ ສະຖານການສຶກສາທິການ ແລະ ກິລາ ປອດຢາເສບຕິດ ໃຫ້ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ຮັບຊາບເປັນປົກກະຕິ;

4. ບັນດາກົມກອງ, ສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ ທຸກຂັ້ນ, ທຸກສາຍໃນຂະແໜງການສຶກສາ ແລະ ກິລາ ແຕ່ລະຂັ້ນ ເປັນເຈົ້າການສັງລວມການຈັດຕັ້ງປະຕິບັດການສ້າງກົມກອງ, ສະຖານການສຶກສາທິການ ແລະ ກິລາ ປອດຢາເສບຕິດ ພ້ອມທັງລາຍງານຕາມຂັ້ນຄຸ້ມຄອງຂອງຕົນ ຮັບຊາບເປັນປົກກະຕິ.



สแกนด้วย CamScanner

## ໝວດທີ 6

### ບົດບັນຍັດສຸດທ້າຍ

**ມາດຕາ 19 ການເຜີຍແຜ່ຂະຫຍາຍ**

ມອບໃຫ້ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ຈັດຕັ້ງເຜີຍແຜ່ຂະຫຍາຍຂໍ້ຕົກລົງສະບັບນີ້ ອອກເປັນນິຕິກຳລະອຽດ ແລະ ໂຄສະນາ, ເຜີຍແຜ່ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບຢ່າງທົ່ວເຖິງ.

**ມາດຕາ 20 ການຈັດຕັ້ງປະຕິບັດ**

ບັນດາຫ້ອງການ, ກົມ, ສະຖາບັນ, ສູນ, ສຳນັກພິມສຶກສາ ແລະ ກິລາ, ບໍລິສັດລັດວິສາຫະກິດ, ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ, ສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ກຳນົດ ແລະ ລະບຽບການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ



สแกนด้วย CamScanner